ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------:::::oOo:::::----------

ສານປະຊາຊົນສູງສຸດ

ເລກທີ 13...../ສປສສ

ນະຄອນຫຼວງວຽງຈັນ, ວັນທີ 07...ມັງກອນ...2011

# ຄຳແນະນຳ

## ຂອງປະທານສານປະຊາຊົນສູງສຸດ

ເຖິງ: ບັນດາປະທານສານປະຊາຊົນພາກ

ເລື່ອງ: ການພິຈາລະນາຄະດີ ເປັນຂັ້ນລົບລ້າງຂອງສານປະຊາຊົນພາກ

ອີງຕາມ ມາດຕາ 22 ແລະ 23 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

ເນື່ອງຈາກວ່າ: ກົດໝາຍວ່າດ້ວຍສານປະຊາຊົນ ໄດ້ມີການປັບປຸງ ແລະ ຖືກຮັບຮອງຕາມມະຕິຕົກລົງ ສະບັບເລກທີ 201/ສພຊ ລົງວັນທີ 26 ພະຈິກ 2009 ຂອງສະພາແຫ່ງຊາດ ແລະ ປະກາດໃຊ້ຕາມລັດຖະດຳລັດ ສະບັບເລກທີ 163/ປປທ ລົງວັນທີ 16 ທັນວາ 2009 ຂອງປະທານປະເທດ ຊຶ່ງໄດ້ກຳນົດພາລະບົດບາດສິດ-ໜ້າທີ່ ຂອງສານປະຊາຊົນພາກ ໃນການພິຈາລະນາຄະດີ ເປັນຂັ້ນລົບລ້າງຄະດີທີ່ສານປະຊາຊົນແຂວງ, ນະຄອນ ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍຫົວໜ້າອົງການໄອຍະການປະຊາຊົນ; ແຕ່ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຍັງບໍ່ທັນໄດ້ກຳນົດສິດອຳນາດ ຂອງສານປະຊາຊົນພາກ ໃນການພິຈາລະນາຄະດີ ເປັນຂັ້ນລົບລ້າງ ແລະ ເປັນຂັ້ນສຸດທ້າຍ ທາງດ້ານກົດໝາຍ ຈົນເຖິງປັດຈຸບັນສອງກົດໝາຍດັ່ງກ່າວ ຍັງຢູ່ໃນໄລຍະຄົ້ນຄວ້າປັບປຸງ.

ເພື່ອຕອບສະໜອງ ໃຫ້ໄດ້ຕາມຄວາມຮຽກຮ້ອງຕ້ອງການ ຂອງວຽກງານຕົວຈິງ ທັງເປັນບ່ອນອີງ ແລະ ຮັບປະກັນຄວາມເປັນເອກະພາບ ໃນການດຳເນີນຄະດີເປັນຂັ້ນລົບລ້າງ ແລະ ຂັ້ນສຸດທ້າຍທາງດ້ານກົດໝາຍ ຂອງສານປະຊາຊົນພາກນັ້ນ.

ປະທານສານປະຊາຊົນສູງສຸດ ອອກຄຳແນະນຳ:

1.ສານປະຊາຊົນພາກ ມີສິດອຳນາດໃນການພິຈາລະນາຄະດີ ເປັນຂັ້ນລົບລ້າງ ແລະ ເປັນຂັ້ນສຸດທ້າຍ ທາງດ້ານກົດໝາຍ ຄະດີທີ່ສານປະຊາຊົນແຂວງ, ນະຄອນ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼືສະເໜີຄັດຄ້ານ ໂດຍຫົວໜ້າອົງການໄອຍະການປະຊາຊົນ;

2.ການພິຈາລະນາຄະດີ ເປັນຂັ້ນລົບລ້າງນັ້ນ ແມ່ນໃຫ້ປະຕິບັດເຊັ່ນດຽວກັບ ສານຂັ້ນລົບລ້າງຂອງສານປະຊາຊົນສູງສຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 107, 108 109, 110, 111, 112 ແລະ 113 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2004; ມາດຕາ 95, 96, 97, 98, 99, 100, 101 ແລະ 102 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2004;

3. ຄຳຮ້ອງ ທີ່ຄູ່ຄວາມຂໍລົບລ້າງ, ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາ ຫຼື ຄຳສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການປະຊາຊົນ ຕ້ອງຍື່ນຕໍ່ສານປະຊາຊົນພາກ ໂດຍຜ່ານສານປະຊາຊົນແຂວງ ຫຼື ນະຄອນ ບ່ອນພິພາກສາຄະດີນັ້ນເປັນຂັ້ນອຸທອນ, ນອກຈາກນີ້ ໃຫ້ປະຕິບັດຕາມມາດຕາ 97 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ມາດຕາ 108 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2004;

4. ການພິຈາລະນາຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ໃນທີ່ປະຊຸມສານ ຕ້ອງໃຫ້ມີຜູ້ຕາງຫົວໜ້າອົງການໄອຍະການປະຊາຊົນພາກເຂົ້າຮ່ວມ ເພື່ອຖະແຫຼງ, ນອກຈາກນີ້ ແມ່ນໃຫ້ປະຕິບັດຕາມມາດຕາ 98 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ມາດຕາ 112 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2004;

5. ໃນກໍລະນີ ສານປະຊາຊົນພາກ ພິພາກສາເປັນຂັ້ນລົບລ້າງ ຫາກໄດ້ລົບລ້າງຄຳພິພາກສາ ຂອງສານຂັ້ນອຸທອນແລ້ວ ຕ້ອງສົ່ງໃຫ້ສານຂັ້ນອຸທອນ ຂອງສານປະຊາຊົນແຂວງ ຫຼື ນະຄອນ ພິພາກສາຄືນໃໝ່ ແລະ ໃນການພິຈາລະນາຄຳພິພາກສາໃໝ່ ຂອງສານຂັ້ນອຸທອນ ຫາກບໍ່ກົງກັບຄຳພິພາກສາ ຂອງສານຂັ້ນລົບລ້າງ ໂດຍທີ່ຄູ່ຄວາມບໍ່ໄດ້ຂໍລົບລ້າງຕື່ມນັ້ນ ກໍໃຫ້ຫົວໜ້າອົງການໄອຍະການປະຊາຊົນພາກສະເໜີຄັດຄ້ານໂດຍໜ້າທີ່ຂຶ້ນສານປະຊາຊົນພາກ, ນອກຈາກນີ້ແລ້ວ ແມ່ນໃຫ້ປະຕິບັດຕາມມາດຕາ 100 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ມາດຕາ 114 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2004;

6. ນອກຈາກ 5 ບັນຫາ ທີ່ກ່າວມາຂ້າງເທິງແລ້ວ ການພິຈາລະນາຄະດີຂັ້ນລົບລ້າງນັ້ນ ໃຫ້ປະຕິບັດຕາມບາງເນື້ອໃນ ຂອງບົດບັນທຶກກອງປະຊຸມວິຊາການ ສະບັບລົງວັນທີ 4 ເມສາ 2008 ທີ່ໄດ້ມີຄຳແນະນຳ ສະບັບເລກທີ 664/ສປສສ ລົງວັນທີ 28 ກັນຍາ 2008 ຂອງປະທານສານປະຊາຊົນສູງສຸດແລ້ວ ແລະ ຄຳແນະນຳອື່ນໆ ທີ່ເຫັນວ່າກ່ຽວພັນກັບສິດອຳນາດ ຂອງສານປະຊາຊົນພາກ;

ເມື່ອບັນດາ ປະທານສານປະຊາຊົນພາກ ໄດ້ຮັບຄຳແນະນຳສະບັບນີ້ແລ້ວ ຈົ່ງນຳໄປເຜີຍແຜ່ໃຫ້ບັນດາຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ວິຊາການ ແລະ ຈ່າສານ ທີ່ຂຶ້ນກັບຕົນຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ມີບັນຫາໃດຫຍຸ້ງຍາກ ໃຫ້ລາຍງານຄືນສານປະຊາຊົນສູງສຸດ ເພື່ອຄົ້ນຄວ້າພິຈາລະນາແກ້ໄຂ.

ປະທານສານປະຊາຊົນສູງສຸດ

ຄຳມີ ໄຊຍະວົງ

ບ່ອນສົ່ງ:

- ໄອຍະການປະຊາຊົນສູງສຸດ 1 ສະບັບ ເພື່ອກວດກາ,
- ປະທານ, ຮອງປະທານ, ບັນດາຄະນະສານ ແລະ ບັນດາກົມຂອງສານປະຊາຊົນສູງສຸດ ບ່ອນລະ 1 ສະບັບເພື່ອຊາບ,
- ບັນດາສານປະຊາຊົນພາກບ່ອນລະ 1 ສະບັບ ເພື່ອປະຕິບັດ
- ໃຫ້ບັນດາສານປະຊາຊົນແຂວງ,ນະຄອນ ແລະ ເຂດ ບ່ອນລະ 1 ສະບັບ ເພື່ອຮັບຊາບ,
- ສຳເນົາໄວ້ 3 ສະບັບ